**OXFAM**
98/8 Sithong Road
Ban Nongduangtai, Sikhottabong District, Vientiane Capital, Lao PDR
info.oxfamlaos@oxfam.org
laos.oxfam.org
Facebook.com/Oxfam.in.Laos
Phone:  +856 21 264 224 / Fax:  +856 21 264 225

**ບົດຂ່າວຂອງ ອົງການ OXFAM**

**May 14, 2020**

**ອົງການ Oxfam ກ່າວວ່າ, ການສັກວັກຊີນໃຫ້ແກ່ປະຊາຊົນທີ່ທຸກຍາກທີ່ສຸດ ເກືອບເຄິ່ງໜຶ່ງຂອງປະຊາ ກອນໂລກ ເພື່ອປ້ອງກັນພະຍາດ ໂຄວິດ-19 ແມ່ນມີມູນຄ່າຕ່ຳກວ່າກຳໄລຂອງ 10 ບໍລິສັດການຢາລາຍໃຫ່ຍ ທີ່ມີໃນສີ່ເດືອນ.**

ອົງການ Oxfam ໄດ້ກ່າວໄວ້ໃນມື້ນີ້ວ່າ, ການສັກວັກຊີນໃຫ້ແກ່ປະຊາຊົນທີ່ທຸກຍາກທີ່ສຸດ ເກືອບເຄິ່ງໜຶ່ງຂອງປະຊາກອນ ໂລກ - ປະມານ 3.7 ຕື້ຄົນ - ເພື່ອປ້ອງກັນພະຍາດ ໂຄວິດ-19 ແມ່ນມີມູນຄ່າຕ່ຳກວ່າກຳໄລຂອງ 10 ບໍລິສັດການຢາລາຍ ໃຫ່ຍ ທີ່ມີໃນສີ່ເດືອນ.

ກ່ອນການເປີດກອງປະຊຸມໃຫ່ຍຂອງອົງການອະນາໄມໂລກ ໃນອາທິດໜ້າ, ໜ່ວຍງານໄດ້ເຕືອນໃຫ້ພາກລັດຖະບານ ແລະ ບໍລິສັດການຢາ ຢັ້ງຢືນວ່າ ຢາວັກຊີນ, ການກວດຫາເຊື້ອ ແລະ ການປິ່ນປົວ ແມ່ນຈະບໍ່ມີສິດທິບັດ ແລະ ຈະຖືກແຈກຢາຍ ຢ່າງເທົ່າທຽມກັນໃຫ້ແກ່ທຸກໆປະເທດ ແລະ ທຸກຄົນ. ກອງປະຊຸມທາງໄກຜ່ານອິນເຕີເນັດ ທີ່ຈະຈັດຂຶ້ນໃນວັນຈັນ 18 ພຶດສະພາ ນີ້ ຈະປະກອບມີບັນດາລັດຖະມົນຕີກະຊວງສາທາລະນະສຸກຈາກທັງໝົດ 194 ປະເທດສະມາຊິກ.

ມູນລະນະທິເກດ (The Gates Foundation) ໄດ້ປະເມີນມູນຄ່າການຈັດຊື້ ແລະ ຈັດສົ່ງ ຢາວັກຊີນ ທີ່ປອດໄພ ແລະ ມີປະສິດຖິພາບ ໄປເຖິງປະຊາຊົນຜູ້ທີ່ທຸກຍາກທີ່ສຸດໃນໂລກ ແມ່ນມີມູນຄ່າປະມານ $25 ຕື້ໂດລາສະຫະລັດ. ໃນປີທີ່ຜ່ານ ມາ, 10 ບໍລິສັດການຢາລາຍໃຫ່ຍຂອງໂລກ ສາມາດສ້າງກຳໄລໄດ້ສູງກວ່າ $89 ຕື້ໂດລາສະຫະລັດ - ຄິດໄລ່ສະເລ່ຍຢູ່ປະ ມານ $30 ຕື້ໂດລາສະຫະລັດໃນທຸກໆສີ່ເດືອນ.

ອົງການ Oxfam ເຕືອນວ່າ ບັນດາປະເທດຮັ່ງມີ ແລະ ບໍລິສັດການຢາລາຍໃຫ່ຍ - ທີ່ຂັບເຄື່ອນໂດຍຜູ້ໄດ້ຮັບຜົນປະໂຫຍດ ພາຍໃນ ຫຼື ພາກເອກະຊົນ - ສາມາດຫຼີກລ້ຽງ ຫຼື ແກ່ຍາວການສົ່ງຢາວັກຊີນອອກໄປຫາປະຊາຊົນທີ່ດ້ອຍໂອກາດ ໂດຍສະ ເພາະແມ່ນປະຊາຊົນທີ່ອາໃສຢູ່ໃນບັນດາປະເທດທີ່ກຳລັງພັດທະນາ.

ສະຫະພາບເອີຣົບ ໄດ້ສະເໜີໃຫ້ມີການເຕົ້າໂຮມສິດທິບັດແບບສະໝັກໃຈ ສຳລັບຢາວັກຊີນ, ການປິ່ນປົວ ແລະ ການກວດຫາເຊື້ອໂຄວິດ-19 ຢູ່ໃນຮ່າງມະຕິກອງປະຊຸມໃຫ່ຍຂອງອານາໄມໂລກ. ຖ້າຫາກສ້າງເປັນຂໍ້ບັງຄັບ ແລະ ນຳໃຊ້ທົ່ວໂລກ, ນີ້ຈະເປັນສິ່ງຮັບປະກັນວ່າທຸກໆປະເທດຈະສາມາດຜະລິດ, ຫຼື ນຳເຂົ້າຢາໃນມູນຄ່າທີ່ຕ່ຳ ສຳລັບທຸກໆປະເພດຢາວັກຊີນທີ່ມີ, ການປິ່ນປົວ ແລະ ການກວດຫາເຊື້ອ. ເຖິງຢ່າງໃດກໍ່ຕາມ, ມີເອກະສານທີ່ຫລຸດອອກມາເປີດເຜີຍວ່າ ຄະນະບໍລິຫານງານຂອງ ທ່ານ ທລັມ (the Trump administration) ໄດ້ພະຍາຍາມທີ່ຈະລຶບຂໍ້ອ້າງອີງຂອງການມີສິດທິບັດຮ່ວມ ແລະ ຕື່ມຄຳເວົ້າທີ່ໜັກແໜ້ນວ່າ ໃຫ້ມີການເຄົາລົບສິດທິບັດຂອງອຸດສາຫະກຳການຢາ. ຊຶ່ງສິ່ງນີ້ຈະໃຫ້ສິດອຳນາດຢ່າງເຕັມສ່ວນແກ່ບໍລິສັດການຢາໃນການຜະລິດ, ແລະ ຕັ້ງລາຄາ ໃຫ້ແກ່ທຸກໆຢາວັກຊີນ, ການປິ່ນປົວ ແລະ ການກວດຫາເຊື້ອທີ່ເຂົາເຈົ້າໄດ້ສ້າງ ຂຶ້ນມາ - ເຖິງແມ່ນວ່າການລົງທຶນໃນການເຮັດຄົ້ນຄວ້າ ແລະ ການພັດທະນາຢາດັ່ງກ່າວແມ່ນເງິນທີ່ມາຈາກບັນດາຜູ້ເສຍພາສີ ກໍ່ຕາມ.

ທ່ານ ໂຈສ ມາເຣຍ ເວຣາ, ຮັກສາການຜູ້ບໍລິຫານໃຫ່ຍຂອງອົງການ Oxfam ສາກົນ ກ່າວວ່າ:

"ການສະໜອງຢາວັກຊີນໃຫ້ແກ່ຄົນ 3.7 ຕື້ຄົນ ຍັງມີມູນຄ່າຕ່ຳກວ່າ ກຳໄລຂອງ 10 ບໍລິສັດການຢາລາຍໃຫ່ຍໄດ້ໃນສີ່ ເດືອນ. ຖ້າບໍ່ສາມາດຢັ້ງຢືນວ່າຢາວັກຊີນຈະມີໃຫ້ສຳລັບທຸກຄົນໂດຍບໍ່ເສຍຄ່າ ແມ່ນຖືຂີ້ຮ້າຍທີ່ສຸດ."

"ຢາວັກຊີນ, ການກວດຫາເຊື້ອ ແລະ ການປິ່ນປົວ ຄວນຈະຖືກແຈກຢາຍໂດຍອີງຕາມຄວາມຕ້ອງການ ບໍ່ແມ່ນຜ່ານການປະ ມູນຈາກຜູ້ທີ່ໃຫ້ມູນຄ່າສູງ. ພວກເຮົາຕ້ອງການຢາວັກຊີນທີ່ປອດໄພ, ບໍ່ມີການຈົດສິດທິບັດ, ການປິ່ນປົວ ແລະ ການກວດຫາເຊື້ອທີ່ສາມາດ ນຳເອົາມາຜະລິດໄດ້ເປັນຈຳນວນຫຼາຍໄດ້ໃນທົ່ວໂລກ ແລະ ມີແຜນທີ່ຈະແຈ້ງ ແລະ ເທົ່າທຽມ ໃນວິທີການແຈກຢາຍ."

ເມື່ອຢາວັກຊີນ ຫຼື ວິທີການປິ່ນປົວໄດ້ຖືກພັດທະນາຂຶ້ນ, ມັນມີຄວາມສ່ຽງສູງທີ່ລັດຖະບານຂອງປະເທດທີ່ຮັ່ງມີ ແລະ ມີອຳນາດຈະໃຫ້ລາຄາທີ່ສູງກວ່າປະເທດທີ່ທຸກຍາກ ແລະ ເຮັດທຸກວິທີທາງທີ່ຈະໄປຢູ່ແຖວໜ້າ ດັ່ງທີ່ເຂົາເຈົ້າໄດ້ເຮັດມາແລ້ວໃນການຍາດແຍ່ງເອົາອຸປະກອນການແພດທີ່ຈຳເປັນອື່ນໆ ເຊັ່ນ ອຸປະກອນປ້ອງກັນໂຕເອງ ແລະ ເຄື່ອງຊ່ວຍຫາຍໃຈ.

ໃນເດືອນມີນາ, ບໍລິສັດການຢາ Gilead ໄດ້ຂະຫຍາຍການຜູກຂາດໃນການຮັກສາພະຍາດໄວຣັດ ແລະ ໄດ້ຖອນໂຕອອກພາຍຫຼັງມີການປະທ້ວງຈາກປະຊາຊົນ. ໃນປະຈຸບັນ, Gilead ໄດ້ບໍລິຈາກຢາ remdesivir ຈຳນວນຫຼາຍໃຫ້ແກ່ລັດຖະບານຂອງປະເທດສະຫະລັດອາເມລິກາ, ແຕ່ມີລາຍງານຂ່າວວ່າ ບໍລິສັດສາມາດສ້າງກຳໄລຈຳນວນມະຫາສານຈາກການຜະລິດຕໍ່ມາ. ມີບາງນັກວິເຄາະຂອງ Wall Street ຄາດການວ່າ Gilead ສາມາດຄິດຄ່າຢາໄດ້ຫຼາຍກວ່າ $4,000 ໂດລາສະຫະລັດຕໍ່ຄົນເຈັບໜຶ່ງຄົນ, ເຖິງແມ່ນວ່າ ຄ່າຢາ remdesivir ອາດມີລາຄາຕ່ຳພຽງແຕ່ $9 ໂດລາສະຫະລັດຕໍ່ຄົນເຈັບໜຶ່ງຄົນ.

ປະເທດທຸກຍາກຫຼາຍປະເທດບໍ່ສາມາດເຂົ້າເຖິງຢາວັກຊີນທີ່ຈຳເປັນ ແລະ ຢາປິ່ນປົວພະຍາດ ເນື່ອງຈາກກົດລະບຽບທາງສິດ ທິບັດທີ່ໃຫ້ສິດຜູກຂາດແກ່ບໍລິສັດການຢາ ແລະ ອຳນາດໃນການຕັ້ງລາຄາຢາ ທີ່ສູງເກີນກວ່າຄວາມສາມາດທີ່ເຂົາເຈົ້າຈະຊື້ໄດ້. ພະຍາດປອດອັກເສບ ໄດ້ຂ້າເອົາຊີວິດຂອງເດັກນ້ອຍອາຍຸຕ່ຳກວ່າ 5 ປີ ໄປຫຼາຍທີ່ສຸດ, ມີເດັກກວ່າ 2,000ຄົນ ຕາຍເນື່ອງຈາກພະຍາດນີ້ໃນທຸກໆມື້. ເປັນເວລາກວ່າຫຼາຍທົດສະວັດ, ທີ່ມີເດັກນ້ອຍຫຼາຍລ້ານຄົນບໍ່ສາມາດເຂົ້າເຖິງວັກຊີນທີ່ຕິດສິດທິ

ບັດເພື່ອ ປ້ອງກັນພະຍາດປອດອັກເສບ ທີ່ຜະລິດໂດຍ ບໍລິສັດ Pfizer ແລະ GlaxoSmithKline ເນື່ອງຈາກມີລາຄາສູງ. ພາຍຫຼັງການຮຽກຮ້ອງຈາກ Médecins San Frontieres ເປັນເວລາຫຼາຍປີ, ທັງ 2 ບໍລິສັດກໍ່ໄດ້ຫລຸດລາຄາຢາວັກຊີນລົງໃນປີ 2016, ແຕ່ກໍ່ສະເພາະພຽງແຕ່ສຳລັບປະເທດທີ່ທຸກຍາກທີ່ສຸດເທົ່ານັ້ນ ເຮັດໃຫ້ເດັກນ້ອຍຫຼາຍລ້ານຄົນກໍ່ຍັງບໍ່ສາມາດເຂົ້າເຖິງຢາວັກຊີນດັ່ງກ່າວໄດ້.

ອົງການ Oxfam ໄດ້ສະເໜີແຜນລະດັບໂລກ 4 ຈຸດ ທີ່ຮຽກຮ້ອງໃຫ້:

1. ມີການແບ່ງປັນຄວາມຮູ້ທຸກໆຢ່າງທີ່ກ່ຽວຂ້ອງກັບເຊື້ອຈຸລະໂລກສາຍພັນໃໝ່ ຫຼື ໂຄວິດ-19 ກໍ່ຄື ຂໍ້ມູນ ແລະ ຊັບສິນທາງປັນຍາ ແລະ ມີຄວາມມຸ້ງໝັ້ນທີ່ຢາກໃຫ້ກອງທຶນສາທາລະນະຕ່າງໆທີ່ສະໜັບສະໜູນການປິ່ນປົວ ຫຼື ຢາວັກຊີນ ປອດຈາກສິດທິບັດ ແລະ ທຸກຄົນສາມາດເຂົ້າເຖິງໄດ້.

2. ມີຄວາມມຸ້ງໝັ້ນທີ່ຈະສະໜອງກຳລັງການຜະລິດ ແລະ ການແຈກຢາຍວັກຊີນໄປທົ່ວໂລກເພີ່ມຕື່ມ ໂດຍນຳໃຊ້ທຶນຈາກລັດຖະບານຂອງປະເທດທີ່ຮັ່ງມີ. ສິ່ງນີ້ໝາຍເຖິງການສ້າງໂຮງງານໃນບັນດາປະເທດຕ່າງໆທີ່ຕ້ອງການຈະແບ່ງປັນ ແລະ ລົງທຶນຈຳນວນຫຼາຍລ້ານໃນການສ້າງບຸກຄະລາກອນແພດໝໍ ທີ່ຈຳເປັນສຳລັບການໃຫ້ການປ້ອງກັນ, ປິ່ນປົວ ແລະ ການເບິ່ງແຍງທັງໃນປະຈຸບັນ ແລະ ອະນາຄົດ.

3. ມີການຕົກລົງເຫັນດີຮ່ວມກັນໃນທົ່ວໂລກ ກ່ຽວກັບ ແຜນການແຈກຢາຍທີ່ເປັນເອກະພາບກັນ ພ້ອມກັບການກຳນົດສູດທີ່ມີຄວາມເປັນທຳ ເພື່ອໃຫ້ອຸປະທານອີງຕາມຄວາມຕ້ອງການ ບໍ່ແມ່ນຄວາມສາມາດໃນການຈ່າຍ. ຢາວັກຊີນ, ການປິ່ນປົວ ແລະ ການກວດຫາເຊື້ອ ຄວນຖືກຜະລິດ ແລະ ສະໜອງໃນມູນຄ່າທີ່ຕໍ່າທີ່ສຸດເທົ່າທີ່ຈະເປັນໄປໄດ້ ສຳລັບ ລັດຖະບານ ແລະ ໜ່ວຍງານຕ່າງໆ, ຄາດຫວັງໃຫ້ລາຄາຢາວັກຊີນບໍ່ເກີນ $2 ໂດລາສະຫະລັດ ສຳລັບປະລິມານຢາທີ່ໃຊ້ຕໍ່ໜຶ່ງຄັ້ງ ແລະ ສະໜອງໃຫ້ແບບບໍ່ເສຍຄ່າ ໃນຈຸດທີ່ສົ່ງມອບ ໃຫ້ແກ່ທຸກຄົນທີ່ຕ້ອງການ.

4. ມີຄວາມມຸ້ງໝັ້ນທີ່ຈະແກ້ໄຂລະບົບທີ່ຊຳລຸດ ໃນການເຮັດການຄົ້ນຄວ້າ ແລະ ພັດທະນາຢາໃໝ່. ລະບົບທີ່ມີໃນປະຈຸບັນສ້າງໃຫ້ກຳໄລຂອງບໍລິສັດການຢາ ຢູ່ເໜືອ ສຸຂະພາບຂອງປະຊາຊົນໃນທົ່ວໂລກ ນັ້ນໝາຍຄວາມວ່າ ມີຄົນຈຳນວນຫຼາຍທີ່ຕ້ອງການ ເຮັດໃຫ້ຢາທີ່ບໍ່ສ້າງກຳໄລແມ່ນຈະບໍ່ໄດ້ຮັບການພັດທະນາ ແລະ ສ່ວນຫຼາຍຢາທີ່ມີກໍ່ມີລາຄາສູງເກີນການເຂົ້າເຖິງຈາກບັນດາປະເທດ ແລະ ປະຊາຊົນທີ່ທຸກຍາກທີ່ສຸດ.

ທ່ານ ເວຣາ ໄດ້ສະຫລຸບວ່າ "ການສະໜອງວັກຊີນໃນລາຄາທີ່ຈັບຕ້ອງໄດ້ສຳລັບທຸກໆຄົນ ແມ່ນຮຽກຮ້ອງໃຫ້ມີການຮ່ວມມືກັນໃນທົ່ວໂລກ. ລັດຖະບານຕ້ອງໄດ້ທຳລາຍກົດ ແລະ ຖືບູລິມະສິດດ້ານສຸຂະພາບຂອງປະຊາຊົນໃນທົ່ວທຸກບ່ອນ ເໜືອກວ່າສິດທິບັດ ແລະ ກຳໄລຂອງບໍລິສັດການຢາ. ລັດຖະບານຕ້ອງໃຫ້ໝັ້ນໃຈວ່າບໍ່ມີຜູ້ໃດຖືກຖິ້ມໄວ້ຂ້າງຫຼັງ."

**ໝາຍເຫດເຖິງບັນນາທິການ**

ສາມາດຮ້ອງຂໍເອກະສານບັນຍາຍໄດ້ ຖ້າຫາກຕ້ອງການ.

ມູນລະນິທິເກດ (The Gates Foundation) ໄດ້ປະເມີນມູນຄ່າຂອງການຜະລິດ ແລະ ການແຈກຢາຍວັກຊີນ ແລະ ໄດ້ຢັ້ງຢືນວ່າ ມູນຄ່າດັ່ງກ່າວກ່ຽວພັນກັບການຜະລິດ ແລະ ການແຈກຢາຍໃນບັນດາປະເທດທີ່ມີລາຍໄດ້ປານກາງ ເຖິງລາຍໄດ້ຕໍ່າເທົ່ານັ້ນ.

ສາມາດເຂົ້າໄປເບິ່ງ ຜົນກຳໄລຂອງ 10 ບໍລິສັດການຢາລາຍໃຫ່ຍ ໃນປີ 2019 ໄດ້ ທີ່ນີ້

ການຖືສິດຜູກຂາດຂອງ ບໍລິສັດ Gilead ສາມາດເຂົ້າໄປເບິ່ງໄດ້ ທີ່ນີ້, ໃນອະນາຄົດ Gilead ຕັ້ງມູນຄ່າຂອງ remdesivir ໄວ້ ທີ່ນີ້ ແລະ ຄວາມເປັນໄປໄດ້ຂອງມູນຄ່າຂອງຢາ remdesivir ຕໍ່ຄົນເຈັບໜຶ່ງຄົນ ສາມາດເບິ່ງໄດ້ຈາກ ທີ່ນີ້.

ອົງການ Oxfam ເຊື່ອວ່າ ຢາວັກຊີນ ຄວນຈະສາມາດຜະລິດ ແລະ ສະໜອງໄດ້ໃນມູນຄ່າບໍ່ເກີນ $2 ໂດລາສະຫະລັດ ສຳລັບປະລິມານຢາທີ່ໃຊ້ຕໍ່ໜຶ່ງຄັ້ງ. ນີ້ເປັນຄວາມທ້າທາຍທີ່ສົມເຫດສົມຜົນໃນການຕັ້ງລາຄາ ເຖິງວ່າໃນກໍລະນີການພັດທະນາວັກຊີນໃໝ່ທີ່ມີຄວາມສັບຊ້ອນ ສຳລັບ ພະຍາດທີ່ຂ້າຊີວິດຄົນໄປຈຳນວນຫຼາຍ ເຊັ່ນ ປອດອັກເສບ ທີ່ມີໃນປະຈຸບັນແມ່ນຕັ້ງລາຄາຢູ່ທີ່.